# ສຕຣີກັບດອກໄມ້

ໂດຍະ ສາວຫຼັກເຈັດ

ສັຕຣີເຫັນດອກໄມ້    ຫົວໃຈຊື່ນສົດໃສ
ຂອບໃຈນຳຄົນຂຽນ    ສົ່ງວຽນມາເຖິງນ້ອງ
ສາວລາວເນົາໃນຫ້ອງ    ຜືນດິນທອງທົ່ວທຸກບ່ອນ
ເຫັນກາບກອນ ດອກໄມ້    ຫົວໃຈນັ້ນແມ່ນຊື່ນບານ ແທ້ດາຍ

ອ່ານຄຳກອນທຸກຂໍ້    ເລີ້ມແຕ່ຈໍ່ຈູ່ມຈີ
ມວນມາລີຂອງລາວ    ກ່ອນມາຄະນຶງບ້ານ
ບານຢູ່ໃນໃຈນ້ອງ    ບໍ່ມີຫມອງຍາມຄຶດຮ່ຳ
ຄຶດນຳແມ່ຜູ້ຂ້າ    ມາລາຮ້ອຍໃສ່ຜົມ ທ່ານເອີຍ

ດົມດອກນັ້ນກິ່ນຊ້ອນ    ຊ້ອນເຊື່ອງຍັງຝັງເລິກ
ດອກຫອມເດີກບໍ່ເຄີຍລືມ    ນ້ອງຄະນຶງແຕ່ທ່າງບ້ານ
ສີຂາວບານໃສກ້າ    ອີນທະຫວາຫອມອ່ອນ
ຄຶດເຫັນດວງດອກຊ້ອນ    ຊອນແລ້ວບໍ່ຢາກຫນີ  ອ້າຍເອີຍ

ຂໍກ່າວພຽງເທົ່ານີ້    ມາລີສົ່ງມາຫາ
ບອກອາຈານ ໂມທະນາ    ຂ້າອ່ານກອນທ່ານຂຽນໄວ້
ດອກໄມ້  ຂອງລາວນັ້ນ    ຫຼາຍພັນແນວທ່ານກ່າວ
ສັຕຣີລາວທຸກທົ່ວຫນ້າ    ບູຊາໄວ້ຢູ່ໃຈ   ທ່ານເອີຍ

ສາວຫຼັກ 7 ເມັດນ້ຳຕານເມືອງສວັນ